# ການເຂົ້າເຖິງເທົ່າທຽມກັນໃນການບໍຣິການຂອງກົມ DSHS

ຖ້າຫາກວ່າທ່ານມີຄວາມເສັຽອົງຄະ,ສະພາບພະຍາບານຫລືໂຣກຈິດ,ຫລືບັນຫາເຣື່ອງການອ່ານແລະຂຽນ ຫລືການຮຽນຮູ້,ພວກເຮົາເຮັດຂັ້ນຕອນເພີ້ມເຕີມຫລືເຮັດວຽກແຕກຕ່າງເພື່ອຈະຊ່ວຍເຫລືອທ່ານໃຫ້ໄດ້ຮັບ ຫລືຮັກສາການບໍຣິການຂອງພວກເຮົາໄວ້.ການຊ່ວຍເຫລືອທີ່ພວກເຮົາເອົາໃຫ້ໄດ້ຖືກອີງໃສ່ຄວາມຕ້ອງການ ຂອງທ່ານ.

ພວກເຮົາຈະຂໍເອົາຄວາມຊ່ວຍເຫລືອຂອງທ່ານເພື່ອຈະຊອກຫາຫົນທາງທີ່ດີທີ່ສຸດທີ່ພວກເຮົາສາມາດຊ່ວຍ ເຫລືອທ່ານໄດ້.ທ່ານບໍຕ້ອງໄດ້ຕອບຄຳຖາມກ່ຽວກັບການເຂົ້າເຖິງເທົ່າທຽມກັນເພື່ອຈະໄດ້ຮັບການຊ່ວຍ ເຫລືອ.

ທ່ານສາມາດຂໍເອົາຄວາມຊ່ວຍເຫລືອເພີ້ມເຕີມພິເສດຈາກພວກເຮົາໄດ້ໃນທຸກໆເວລາ.

ຖ້າຫາກວ່າທ່ານຕ້ອງການຄວາມຊ່ວຍເຫລືອເພີ້ມເຕີມພິເສດ,ພວກເຮົາຈະເຮັດວຽກນຳທ່ານເພື່ອຈະເອົາ ແຜນການເຂົ້າເຖິງເທົ່າທຽມກັນເຂົ້າໃສ່ກັນ.

ພວກເຮົາຈະເອົາໃບໂກປີຂອງແຜນການເຂົ້າເຖິງເທົ່າທຽມກັນຂອງທ່ານໃຫ້ທ່ານ.ພວກເຮົາຍັງສາມາດ ເອົາໂກປີໃບນຶ່ງໃຫ້ຄົນອື່ນອີກຜູ້ທີ່ຊ່ວຍເຫລືອທ່ານໃຫ້ໄດ້ຮັບການບໍຣິການຂອງພວກເຮົາ.

## ອັນນີ້ແມ່ນຫົນທາງບາງຢ່າງທີ່ພວກເຮົາສາມາດເອົາການຊ່ວຍເຫລືອເພີ້ມເຕີມພິເສດໃຫ້ແກ່ຜູ້ທີ່ຕ້ອງການມັນ:

- ✓ ຊ່ວຍຂຽນປະກອບໃບຟອມ DSHS
- ✓ ຈັດຫາເຄື່ອງຊ່ວຍຟັງສຽງ,ນາຍພາສາໃບ້,ຫລືເຄື່ອງຊ່ວຍຕິດຕໍ່ແນວອື່ນ.
- ✓ ສົ່ງໃບຟອມແລະຫນັງສືໄປໃຫ້ເປັນຮູບຮ່າງຕົວພິມໃຫຍ່,ເອເລກໂທຣນິກຫລືຮູບຮ່າງແນວອື່ນ.
- ✓ ອ່ານຫລືອະທິບາຍຫນັງສືຫລືໃບຟອມທີ່ພວກເຮົາສົ່ງໄປໃຫ້
- ✓ ຊ່ວຍເອົາຣາຍລະອຽດທີ່ພວກເຮົາຕ້ອງການມາໃຫ້ກ່ອນວັນທີທີ່ພວກເຮົາຕ້ອງການມັນ
- ✓ ສົ່ງໂກປີຂອງຫນັງສືໄປຫາຫລືຕິດຕໍ່ໄປຫາຄົນໃດຄົນນຶ່ງຜູ້ທີ່ຊ່ວຍເຫລືອທ່ານ
- ✓ ອະນຸຍາດໃຫ້ຄົນໃດຄົນນຶ່ງທີ່ທ່ານເລືອກເອົາທີ່ຈະກຳການຊ່ວຍເຫລືອເງິນ,ອາຫານແລະ/ຫລືພະຍາບານຂອງທ່ານ
- ✓ ໃຫ້ເວລາເພີ້ມເຕີມເພື່ອຈະຕອບຄືນມາຫາພວກເຮົາຫລືເອົາຣາຍລະອຽດໃຫ້ພວກເຮົາ
- ✓ ໂທຣະສັບໄປຫາແທນທີ່ວ່າຈະໃຫ້ທ່ານເຂົ້າມາຫ້ອງການ
- ✓ ພົບກັບທ່ານຢູ່ໃນຫ້ອງທີ່ບໍ່ມີການຣົບກວນແນວໃດ
- ✓ ໂທຣະສັບໄປຫາທ່ານກ່ອນທີ່ພວກເຮົາຈະປະຕິເສດ,ຢຸດ,ຫລືລຸດການຊ່ວຍເຫລືອຂອງທ່ານລົງແລະ,ຖ້າຫາກວ່າທ່ານບໍ່ເຫັນພ້ອມນຳຄຳຕັດສິນຂອງພວກເຮົາ,ຊ່ວຍທ່ານຂໍເອົາການຟັງເຣື່ອງແລະ/ຫລືຂໍເອົາການຊ່ວຍເຫລືອທີ່ດຳເນີນຕໍ່ໄປ
- ✓ ເຕືອນທ່ານກ່ຽວກັບຫມາຍນັດພົບ
- ✓ ຕິດຕໍ່ໄປຫາທ່ານຖ້າຫາກວ່າທ່ານຜິດນັດຫມາຍນັດພົບຫລືກາຍວັນທີທີ່ຕ້ອງການ
- ✓ ກວດເບິ່ງຄຳຕັດສິນຄືນທີ່ຈະຢຸດຫລືລຸດການຊ່ວຍເຫລືອລົງເພື່ອຈະໃຫ້ແນ່ໃຈວ່າພວກເຮົາໄດ້ປະຕິບັດຕາມແຜນການເຂົ້າເຖິງເທົ່າທຽມກັນຂອງທ່ານ
- ✓ ເອົາຄວາມຊ່ວຍເຫລືອອື່ນໆໃຫ້ທ່ານທີ່ທ່ານຕ້ອງການເພື່ອຈະໄດ້ຮັບຫລືຮັກສາການບໍຣິການຂອງພວກເຮົາໄວ້

*ກົດຣະບຽບທີ່ພວກເຮົາປະຕິບັດຕາມສຳລັບການເຂົ້າເຖິງເທົ່າທຽມກັນແມ່ນຢູ່ໃນກົດຫມາຍປົກຄອງຣັດ ວໍຊິງຕັນ(WAC) 388-472-0010 ໄປເຖິງ-0050 ພາຍໃຕ້ການອຳນວຍຄວາມສະດວກເພີ້ມເຕີມທີ່ຈຳເປັນ*

Washington State
Department of Social
& Health Services

**DSHS 22-1248 LA (4/08)**